**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

**ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບວັດທະນະຖາວອນ**

**-------===000===-------**

# <u>ຄຳຮ້ອງທຸກ</u>

**ຮຽນ: ບັນດາທ່ານທີ່ນັບຖື**

**ເລື່ອງ: ຂໍຄວາມຊ່ວຍເຫຼືອຕິດຕາມການດຳເນີນການສືບຂ່າວຊອກຫາຄົນຫາຍຂອງ ເຈົ້າໜ້າທີ່**

ຂ້າພະເຈົ້າ ນາງ ອຶງ ຊຸຍມິງ, ປະຈຸບັນຢູ່ບ້ານ ໂຄກນິນ, ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ. ມີຈຸດປະສົງ ຂໍຮ້ອງທຸກມາຍັງທ່ານ ແລະນີ້ກໍເປັນ**<u>ຄຳຮ້ອງທຸກສະບັບທີສາມ</u>**ທີ່ຂ້າພະເຈົ້າໄດ້ຂຽນຂຶ້ນໃນເລື່ອງ: ການຂໍຄວາມຊ່ວຍເຫຼືອຕິດຕາມການດຳເນີນການສືບຂ່າວຊອກຫາການຫາຍຕົວຂອງສາມີ ຊື່ **ທ້າວ ສົມບັດ ສົມພອນ**, ອາຍຸ 60 ປີ, ທີ່ໄດ້ຫາຍຕົວໄປໃນວັນທີ 15 ທັນວາ 2012.

ມື້ນີ້ເປັນມື້ທີ່ 45ຫລັງຈາກສາມີຂອງຂ້າພະເຈົ້າໄດ້ຫາຍຕົວໄປ ແລະ ຂ້າພະເຈົ້າເຮັດທຸກຢ່າງທີ່ເປັນການຮ່ວມມືກັບເຈົ້າໜ້າທີ່ຕຳຫລວດໃນການໃຫ້ຂໍ້ມູນເພື່ອຊ່ວຍໃນການສືບຫາຕົວສາມີຂອງຂ້າພະເຈົ້າ ໃຫ້ໄວເທົ່າທີ່ຈະໄວໄດ້. ຂ້າພະເຈົ້າເອງກໍໄດ້ພົບກັບທ່ານຮອງປະທານສະພາແຫ່ງຊາດ ແລະພະນັກງານຂອງສະພາເອງເພື່ອຍື່ນຄຳຮ້ອງທຸກຕໍ່ສະພາແຫ່ງຊາດໃນນາມຂອງປະຊາຊົນເພື່ອຜັກດັນການສືບຫາໃຫ້ໄວຂຶ້ນ. ແຕ່ເຖິງຢ່າງໃດກໍ່ດີທຸກຂໍ້ມູນ ແລະທຸກຂະບວນການທີ່ຂ້າພະເຈົ້າໄດ້ເຮັດລົງໄປນັ້ນກໍບໍ່ໄດ້ຮັບຄວາມຄືບໜ້າຫຍັງທັງໝົດກ່ຽວກັບການສືບຂ່າວ, ນອກຈາກຖະແຫລງການທີ່ເຈົ້າໜ້າທີ່ໄດ້ບອກທາງສື່ມວນຊົນວ່າ "ປະຈຸບັນເຈົ້າໜ້າທີ່ກຳລັງທຳການສືບຫາ"

ຍັງມີອີກບາງປະເດັນດັ່ງລຸ່ມນີ້ທີ່ຂ້າພະເຈົ້າຍັງບໍ່ທັນໄດ້ຮັບຄຳຕອບທີ່ຊັດເຈນຄື:

1. ເຈົ້າໜ້າທີສືບສວນໄດ້ສອບຖາມຫຍັງແດ່ຕໍ່ກັບຕຳຫລວດທີ່ໄດ້ຢຸດລົດຂອງສາມີຂ້າພະເຈົ້າ ໃນຕອນແລງຂອງວັນທີ 15 ທັນວາ 2012? ເຈົ້າໜ້າທີ່ໄດ້ຖາມບໍ່ວ່າເກີດຫຍັງຂຶ້ນໃນມື້ນັ້ນ ແລະ ພວກເຂົາໄດ້ເຫັນ ແລະໄດ້ຮູ້ຫຍັງແດ່?

2. ບໍ່ຮູ້ວ່າຄົນຂີ່ລົດຈັກທີ່ໄດ້ຂັບລົດຈິບຂອງ ສົມບັດໄປນັ້ນໄດ້ຖືກສືບຖາມ ແລະຂະຫຍາຍຜົນແນວໃດ?
3. ລົດຈິບຂອງສົມບັດ (ເລກທະບຽນ ກກ.2624) ໄດ້ຖືກພົບເຫັນຫລືຍັງ?
4. ບໍ່ຮູ້ວ່າລົດກະບະສີຂາວທີ່ໄດ້ຂັບມາຈອດຢູ່ປ້ອມຕຳຫລວດແລະຮັບເອົາຕົວສາມີຂອງຂ້າພະເຈົ້າໄປນັ້ນ ໄດ້ຖືກຂະຫຍາຍຜົນຕື່ມແນວໃດ?
5. ແລ້ວຄົນຂັບລົດກະບະສີຂາວນັ້ນໄດ້ຖືກສອບຖາມ ແລະຂະຫຍາຍຜົນຫລືຍັງ?
6. ຖ້າຫາກວ່າແຟ້ມພາບຈາກກ້ອງວົງຈອນປິດຫາກເຫັນບໍ່ຊັດເຈນຕາມການລາຍງານຂອງເຈົ້າໜ້າທີ່,
   ບໍ່ຮູ້ວ່າທາງກະຊວງປ້ອງກັນຄວາມສະຫງົບໄດ້ຂໍຄວາມຊ່ວຍເຫລືອດ້ານເຕັກນິກຈາກລັດຖະບານ ອື່ນຫລື ອົງການສາກົນອື່ນໆຫລືບໍ່? ແລ້ວກ້ອງວົງຈອນປິດທີ່ຕິດຕັ້ງຕາມສາຍທາງທ່າເດື່ອກໍ ເຫັນບໍ່ຊັດເຈນເຊັ່ນດຽວກັນທັງໝົດບໍ່?
7. ບໍ່ຮູ້ວ່າເຈົ້າໜ້າທີ່ຕຳຫລວດຂອງລາວໄດ້ຍົກປະເດັນນີ້ແຈ້ງ ແລະຂໍຄວາມຊ່ວຍເຫລືອຈາກ ຕຳຫລວດສາກົນ ຫລືບໍ່? ແລະໄດ້ແຈ້ງໃຫ້ແກ່ບັນດາເພື່ອນບ້ານໃນພາກພື້ນຮັບຮູ້ ແລະຊອກຫາຕົວ ສົມບັດຫລືບໍ່?

ທຸກຄຳຖາມຂ້າງເທິງນັ້ນຂ້າພະເຈົ້າຍັງບໍ່ທັນໄດ້ຮັບຄຳຕອບທີ່ເປັນໜ້າພໍໃຈ.

ຂ້າພະເຈົ້າໝັ້ນໃຈວ່າທາງພາກລັດຖະບານ ແລະບັນດາສະຖາບັນປ້ອງກັນຄວາມສະຫງົບມີທ່າແຮງ ພຽງພໍໃນການຊອກຫາຕົວຂອງສົມບັດ. ດັ່ງນັ້ນ, ສວນຕົວຂ້າພະເຈົ້າເອງຍັງບໍ່ທັນເຂົ້າໃຈຄັກແນ່ວ່າ ເປັນຫຍັງ ຫລັງຈາກ 45 ວັນຂອງການສືບຂ່າວຂອງເຈົ້າໜ້າທີ່ຈຶ່ງບໍ່ສາມາດໃຫ້ຂໍ້ມູນທີຊັດເຈນໄດ້, ສະນັ້ນເຮັດໃຫ້ ຂ້າພະເຈົ້າອຸກໃຈເປັນທຸກ ແລະກັງວົນຫລາຍ.

ຍັງມີອີກຢ່າງໜຶ່ງທີ່ຂ້າພະເຈົ້າຢາກເນັ້ນໜັກຕື່ມຄື ທ. ສົມບັດ ສົມພອນ ກໍ່ແມ່ນຄົນລາວຄົນນຶ່ງທີ່ມີ ສິດພາຍໃຕ້ລັດຖະທຳມະນູນ ແລະກົດໝາຍຂອງລາວ ແລະມີສິດທີໄດ້ຮັບການປົກປ້ອງຈາກພັກ ແລະລັດ. ຖ້າຫາກວ່າ ສົມບັດ ຫາກໄດ້ກະທຳຄວາມຜິດແທ້ລາວກໍ່ຄວນຖືກດຳເນີນຕາມກະບວນການ ທາງກົດໝາຍຢ່າງເປັນທຳ.

ສຸດທ້າຍຂ້າພະເຈົ້າກໍ່ຍັງມີຄວາມກັງວົນຕໍ່ສຸຂະພາບຂອງສາມີຂອງຂ້າພະເຈົ້າຄືລາວ

ມີໂລກປະຈຳຕົວ ທີ່ຈຳຕ້ອງໄດ້ກິນຢາ ແລະກວດສຸຂະພາບເປັນປະຈຳ. ຖ້າຫາກສາມີຂ້າພະເຈົ້າ ບໍ່ໄດ້ກິນຢາ ແລະກວດສຸຂະພາບເປັນປະຈຳຈະເຮັດໃຫ້ສຸຂະພາບຂອງສາມີຂ້າພະເຈົ້າຊຸດໂຊມຕື່ມເຖິງຂັ້ນຍາກທີ່ຈະປິ່ນປົວ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຂໍຄວາມກະລຸນາມາຍັງພັກ ແລະລັດຖະບານກະລຸນາຮີບຮ້ອນໃນການໃຫ້ຂໍ້ມູນກ່ຽວກັບຄວາມຄືບໜ້າຂອງການສືບສວນສອບສວນ ຕໍ່ກັບການຫາຍໂຕໄປ ຂອງສາມີຂ້າພະເຈົ້າ. ແຕ່ຖ້າຫາກສາມີຂ້າພະເຈົ້າຫາກຖືກຄວບຄຸມຕົວ ກໍຂໍໃຫ້ຂ້າພະເຈົ້າ ແລະຄອບຄົວໄດ້ໃຊ້ສິດເຂົ້າພົບ ແລະຢ້ຽມຢາມຜູ້ກ່ຽວດ້ວຍ.

ຮຽນມາດ້ວຍຄວາມເຄົາລົບເປັນຢ່າງສູງ ແລະຫວັງວ່າທ່ານຈະຊ່ວຍພິຈາລະນາຕາມສົມຄວນດ້ວຍ.

ວຽງຈັນ, ວັນທີ 30/01/2013

**ນາຍບ້ານ, ບ້ານໂຄກນິນ**

**ຜູ້ຮ້ອງທຸກ**

ນາງ ອຶງ ຊຸຍມິງ
ພັນລະຍາ ຂອງ ທ່ານ ສົມບັດ ສົມພອນ
ໂທລະສັບ: 020 2368 8818
ອີເມວ: shuimeng@gmail.com